# ບົດບາດຂອງໂຮງຮຽນ/ການສຶກສາ (ສາມັນ) ໃນການປົກປັກຮັກສາ ແລະ ເຜີຍແຜ່ມໍລະດົກ ດ້ານວັນນະຄະດີຂອງລາວ

6

ຄຳຮຸ່ງ ສັກລໍຄຳ

ຂ້າພະເຈົ້າຮູ້ສຶກເປັນກຽດ ທີ່ໄດ້ມາຮ່ວມກອງປະຊຸມສາກົນ ວ່າດ້ວຍມໍລະດົກວັນນະຄະດີລາວ ແນວທາງໃນການປົກປັກຮັກສາ ເຜີຍແຜ່ ແລະການຄົ້ນຄວ້າ, ໃນຖ້າມກາງບັນດາທ່ານ ນັກປາດ ອາຈານ ຜູ້ຮູ້ ຜູ້ຊ່ຽວຊານ ທີ່ມາຈາກຫລາຍຊາດ ຫລາຍພາສາ. ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນ ຕໍ່ຄະນະຮັບຜິດຊອບຈັດການປະຊຸມ ທີ່ໄດ້ເຊື້ອເຊີນຂ້າພະເຈົ້າມານະໂອກາດນີ້

ກ່ອນອື່ນ ຂ້າພະເຈົ້າ ຕ້ອງຂໍໂທດລ່ວງໜ້າ ເພາະຂ້າພະເຈົ້າບໍ່ແມ່ນນັກຄົ້ນຄວ້າວັນນະຄະດີ ແລະ ກໍບໍ່ມີພື້ນຖານວິຊາການໃນດ້ານນີ້. ຂ້າພະເຈົ້າມາຮ່ວມ ແລະ ມີຄຳເຫັນໃນຄັ້ງນີ້ ໃນຖານະຜູ້ບໍລິຫານການສຶກສາ ເພື່ອມາຖາມ ແລະ ໃຫ້ຄຳຕອບວ່າ ໃນເມື່ອວັນນະຄະດີ ເປັນມໍລະດົກດ້ານວັດທະນະທຳ ແລະ ຈິດໃຈຂອງຄົນທັງຫລາຍ ບົດບາດຂອງໂຮງຮຽນ/ການສຶກສາ ໃນການປົກປັກຮັກສາເຜີຍແຜ່ ແລະ ຄົ້ນຄວ້າເພື່ອພັດທະນາໃນດ້ານນີ້ ຄວນຈະເຮັດແນວໃດ ?

ຂ້າພະເຈົ້າຂໍເປັນເອກະພາບນຳບັນດາທ່ານ ນັກປາດອາຈານ ນັກຊ່ຽວຊານທັງຫລາຍ ທີ່ໄດ້ເວົ້າເຖິງຄຸນຄ່າອັນມະຫາສານ ຂອງວັນນະຄະດີ ໃນຖານະເປັນມູນມໍລະດົກ ທາງດ້ານວັດທະນະທຳ ແລະ ຈິດໃຈຂອງຊາດ ແລະ ຂອງມວນມະນຸດ ຍ້ອນແນວນັ້ນ ມັນມີຄວາມຈຳເປັນທີ່ຈະຕ້ອງປົກປັກຮັກສາ ຄົ້ນຄວ້າ ພັດທະນາ ແລະ ເຜີຍແຜ່ດ້ວຍຮູບແບບ ແລະ ວິທີການທີ່ຫລາກຫລາຍ, ນັບທັງດ້ວຍລະບົບ ການສຶກສາ ແລະ ໂຮງຮຽນ

## ນະໂຍບາຍທາງການສຶກສາ ແລະ ໂຮງຮຽນ

ການກຳນົດນະໂຍບາຍທາງການສຶກສາຂອງຊາດນຶ່ງໆ ກໍລ້ວນແຕ່ມຸ່ງຫວັງເພື່ອສ້າງພົນລະເມືອງຂອງ ຊາດໃຫ້ມີຄຸນລັກສະນະ ຫລືໃຫ້ໄດ້ຕາມ 5 ຫລັກມູນຂອງການສຶກສາ ຄື ປັນຍາສຶກສາ, ຄຸນສົມບັດສຶກສາ, ສິລະປະ

ບົດບາດຂອງໂຮງຮຽນ/ການສຶກສາ (ສາມັນ) ໃນການປົກປັກຮັກສາ ແລະ

ເຜີຍແຜ່ມໍລະດົກດ້ານວັນນະຄະດີຂອງລາວ

ສຶກສາ, ກໍາມະສຶກສາ, ພະລະສຶກສາ. ມີເນື້ອໃນນຶ່ງທີ່ເປັນອັນສອດທ້ອຍຢູ່ກັບທຸກຫລັກມູນນັ້ນ ກໍຄືການປົກປັກຮັກສາ ແລະ ເສີມຂະຫຍາຍສິ່ງທີ່ເປັນຍອດຍິ່ງຂອງຊາດ ແລະ ສາກົນ (ມວນມະນຸດ) ທາງດ້ານວັດທະນະທໍາ ຮີດຄອງປະເພນີອັນດີງາມ, ສິລະປະວັນນະຄະດີ, ວິທະຍາສາດ, ພາສາ ຊຶ່ງທຸກລະບົບການສຶກສາ ຖ້າຢາກໃຫ້ສົມບູນ ກໍຈະຕ້ອງຄໍານຶງເຖິງ

ໂຮງຮຽນ ແມ່ນຮູບການຈັດຕັ້ງຂອງຊາດ, ຂອງສັງຄົມ ແລະ ຊຸມຊົນ ເພື່ອປະຕິບັດແນວທາງການສຶກສາທີ່ໄດ້ເວົ້າມາຂ້າງເທິງ ໂດຍຜ່ານຮູບການການປະຕິບັດຫລັກສູດຂອງຊາດ ແລະ ຂອງ ທ້ອງຖິ່ນ. ນອກນັ້ນ ໂຮງຮຽນຍັງຈັດຕັ້ງປະຕິບັດ ບັນດາກິດຈະກໍານອກຫລັກສູດ ຊຶ່ງມີຈຸດປະສົງໃນການຝຶກຝົນຫລໍ່ຫລອມ ຄຸນສົມບັດທັດສະນະຄະຕິຂອງຜູ້ຮຽນ ແລະ ປະກອບສ່ວນໃນການປົກປັກ ຮັກສາ ແລະ ເຜີຍແຜ່ມູນມໍລະດົກ ທາງດ້ານວັດທະນະທໍາວັນນະຄະດີຂອງຊາດ ແລະ ຂອງທ້ອງຖິ່ນ ຕົນອີກດ້ວຍ. ຕໍ່ບັນຫາດັ່ງກ່າວນັ້ນ ຫລັກການຄຸ້ມຄອງ ແລະ ກົດລະບຽບຂອງໂຮງຮຽນສາມັນຂອງ ລາວເຮົາ ລ້ວນແຕ່ໄດ້ກໍານົດ ແລະ ວາງອອກເປັນພື້ນຖານ ແລະ ກອບຂອງຫລັກການໄວ້ແລ້ວ

## ການປະກອບສ່ວນຂອງໂຮງຮຽນ ໃນການປົກປັກຮັກສາ ແລະ ເຜີຍແຜ່ວັນນະຄະດີ

ໃນໄລຍະຜ່ານມາ ການສຶກສາ ແລະ ໂຮງຮຽນ ໄດ້ປະກອບສ່ວນໃນການປົກປັກຮັກສາ ແລະ ເຜີຍແຜ່ວັນນະຄະດີຂອງຊາດ ແລະ ສາກົນຢ່າງຕັ້ງໜ້າສົມຄວນ ດ້ວຍຮູບການຕົ້ນຕໍ ແມ່ນການກໍານົດໃນ ຫລັກສູດການຮຽນ-ການສອນ ວິຊາວັນນະຄະດີ ພາສາ ໃນທຸກຊັ້ນ ຕັ້ງແຕ່ປະຖົມ ເຖິງຊັ້ນສູງ (ມະຫາວິທະຍາໄລ) ແລະ ໃນຕົວຈິງ ກໍມີກິດຈະກໍາການຮຽນ-ການສອນ ຢ່າງຟົດຟື້ນ ເປັນລະບົບ, ມີການຈັດຕັ້ງ ການຄົ້ນຄວ້າວິໄຈ, ການສອບເສັງແຂ່ງຂັນນັກຮຽນເກັ່ງ ໃນການແຕ່ງ ການຕໍານິວິຈານ ວິເຄາະວັນນະຄະດີ ອັນນີ້ໄດ້ປະກອບສ່ວນໃນການພັດທະນາວັນນະຄະດີໄປໃນໂຕ (ມີການສອບເສັງ ແຂ່ງຂັນນັກຮຽນເກັ່ງວັນນະຄະດີໃນທຸກຂັ້ນ: ປະຖົມ, ມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍ ໃນທຸກໆປີ). ນອກນັ້ນ ໃນແງ່ຂອງການເຄື່ອນໄຫວນອກຫລັກສູດ, ຂະແໜງສຶກສາ (ສາມັນ) ໄດ້ຮ່ວມມືກັບຫໍສະໝຸດແຫ່ງຊາດ ໄດ້ດໍາເນີນໂຄງການສົ່ງເສີມການອ່ານໃນໂຮງຮຽນສາມັນສຶກສາ ໂດຍມີກິດຈະກໍາຫລັກ ແມ່ນການສ້າງຫ້ອງສະໝຸດ, ຫ້ອງອ່ານໜັງສືຫລື ມຸມອ່ານໃນໂຮງຮຽນ, ຫ້ອງຮຽນ, ການຝຶກອົບຮົມບຸກຄະລາກອນ ດ້ານການປົກປັກຮັກສາປຶ້ມ, ການສົ່ງເສີມການອ່ານ, ການຕອບສະໜອງປຶ້ມ ຫລືຕູ້ສະໝຸດເຄື່ອນທີ່ໃຫ້ໂຮງຮຽນ ເປັນຕົ້ນ. ຂ້າພະເຈົ້າ

ຄິດວ່າ ນີ້ກໍເປັນການປົກປັກຮັກສາ ແລະ ເຜີຍແຜ່ວັນນະຄະດີໄປໃນໂຕອີກຮູບການນຶ່ງ. ກິດຈະກຳຕ່າງໆ ທີ່ໄດ້ເວົ້າມານັ້ນ ລ້ວນແລ້ວແຕ່ເປັນກິດຈະກຳທີ່ດີ ຄວນໄດ້ຮັບການສືບຕໍ່, ສົ່ງເສີມ, ເສີມຂະຫຍາຍ. ແຕ່ເມື່ອຖາມວ່າ ພຽງພໍ ແລະ ສົມບູນແລ້ວບໍ່ ? ໃນການເຮັດບົດບາດໃນການປົກປັກຮັກສາ ແລະ ເຜີຍແຜ່ວັນນະຄະດີ ຂ້າພະເຈົ້າຄິດວ່າ ຍັງບໍ່ພຽງພໍ ແລະ ຂອບເຂດກໍຍັງຈຳກັດຫລາຍ ທັງໃນດ້ານເນື້ອໃນ ແລະຂະໜາດ, ພວກເຮົາຄວນເອົາໃຈໃສ່ຕໍ່ບັນຫາ ດັ່ງລຸ່ມນີ້ ເພື່ອໃຫ້ດີຂຶ້ນ :

## ດ້ານຫລັກສູດການຮຽນ-ການສອນ (ໃນໂຮງຮຽນສາມັນ) :

ຕ້ອງມີການປະເມີນ ແລະ ຄົ້ນຄວ້າຕື່ມອີກວ່າ ສິ່ງທີ່ພວກເຮົາຮຽນ-ສອນ ກັນຢູ່ທຸກມື້ນີ້ ດີແລ້ວຫລືບໍ່? ຄວນຈັດກອງປະຊຸມວິຊາການ ໂດຍເປີດໂອກາດໃຫ້ນັກວິຊາການ ທັງທາງດ້ານສຶກສາສາດ ນັກການ ສຶກສາ, ນັກພາສາສາດ ວັນນະຄະດີ ຄູ ເຂົ້າຮ່ວມຢ່າງຕັ້ງໜ້າ ເພື່ອເຮັດໃຫ້ຫລັກສູດສົມບູນຂຶ້ນຕື່ມ

## ດ້ານການສ້າງຄູ ແລະ ບຸກຄະລາກອນ :

ຕ້ອງສ້າງໃຫ້ພຽງພໍກັບຄວາມຕ້ອງການ ທັງທາງດ້ານຈຳນວນ ແລະ ເອົາໃຈໃສ່ດ້ານຄຸນນະພາບ ໄປພ້ອມກັນ. ຄູສອນວິຊາວັນນະຄະດີ ຄວນສາມາດເປັນທັງນັກອົບຂວາຍ, ນັກປະຕິບັດ, ນັກຈັດຕັ້ງໄປພ້ອມ ບໍ່ພຽງແຕ່ສາມາດສອນຕາມປຶ້ມແບບຮຽນເທົ່ານັ້ນ, ປັດຈຸບັນນີ້ ຕາມຂ້າພະເຈົ້າສັງເກດ ເຫັນວ່າ ຍັງຂາດເຂີນຫລາຍ

## ປຶ້ມແບບຮຽນ ແລະ ປຶ້ມອ່ານເສີມຕ່າງໆ :

ປັດຈຸບັນຕ້ອງປັບປຸງໄດ້ດີຂຶ້ນ ປຶ້ມແບບຮຽນກໍຂາດເຂີນ, ປຶ້ມອ່ານເສີມ ເກືອບວ່າບໍ່ມີເລີຍໃນໂຮງຮຽນສ່ວນຫລວງຫລາຍ ຄວນເອົາໃຈໃສ່ພັດທະນາບຸກຄະລາກອນດ້ານນີ້ ຢ່າງຮີບດ່ວນ. ຂ້າພະເຈົ້າຊົມເຊີຍ ຄະນະຮັບຜິດຊອບກ່ຽວກັບການປົກປັກຮັກສາໜັງສືຜູກໃບລານລາວ ແຕ່ວ່າ ການປົກປັກຮັກສາຢູ່ໃນສູນ ຫລືວັດ ເປັນພຽງສ່ວນນຶ່ງຂອງການພັດທະນາ ເຮັດແນວໃດຈຶ່ງຈະເອົາວັນນະກຳນີ້ ຊຶ່ງປະກອບດ້ວຍ ສຸພາສິດ ປາຊະຍາ ຄຳສັ່ງສອນຕ່າງໆ ຊຶ່ງເຊື່ອງຊ້ອນຢູ່ໃນໜັງສືຜູກໃບລານ ມາເປັນສະບັບທີ່ຄູອາຈານ ແລະນັກຮຽນ ໃນໂຮງຮຽນ ສາມາດນຳໃຊ້ໄດ້ ກໍເປັນກິດຈະກຳນຶ່ງທີ່ສຳຄັນເທົ່າໆກັບ ການປົກປັກຮັກສາ - ກິດຈະກຳນັ້ນ ຄວນຈະໄດ້ລິເລີ່ມ ເພາະແນ່ນອນວ່າພວກເຮົາບໍ່ສາມາດຈະເອົາໃບລານເຫລົ່ານັ້ນມາໄວ້ ໂຮງຮຽນໄດ້ທັງໝົດ

ບົດບາດຂອງໂຮງຮຽນ/ການສຶກສາ (ສາມັນ) ໃນການປົກປັກຮັກສາ ແລະ
ເຜີຍແຜ່ມໍລະດົກດ້ານວັນນະຄະດີຂອງລາວ

## ການຈັດຕັ້ງປະຕິບັດຫລັກສູດ ແລະ ກິດຈະກຳນອກຫລັກສູດ ຕໍ່ກັບການປົກປັກຮັກສາ, ເຜີຍແຜ່ ແລະ ຄົ້ນຄວ້າວັນນະຄະດີ ໃນໂຮງຮຽນ

ການຮຽນ-ສອນ ວັນນະຄະດີ ຄວນສົມທົບລະຫວ່າງ ທິດສະດີ ແລະພາກປະຕິບັດຕົວຈິງ. ຄູຕ້ອງສົ່ງເສີມໃຫ້ນັກຮຽນ ອອກໄປປະຕິບັດກິດຈະກຳນອກໂຮງຮຽນ ເຊັ່ນ: ບ່ອນໃດມີຫໍໄຕຂອງວັດ ຫລືສູນປົກປັກຮັກສາໜັງສືຜູກໃບລານ ຄວນໃຫ້ນັກຮຽນມີໂອກາດໄດ້ສຳຜັດກັບສະຖານທີ່ດັ່ງກ່າວ (ໂດຍສະເພາະ ນັກຮຽນຊັ້ນມັດທະຍົມ). ການຈັດຕັ້ງສະໂມສອນຮັກອ່ານ, ນັກຂຽນໜຸ່ມ, ນັກຕຳນິວິຈານ ວັນນະຄະດີ, ນັກແຕ່ງ, ການສອບເສັງ ແຂ່ງຂັນນັກຮຽນເກັ່ງວັນນະຄະດີ ໃນລະດັບໂຮງຮຽນ, ເມືອງ, ແຂວງ ແລະ ທົ່ວປະເທດຄວນໃຫ້ເປັນຂະບວນການທີ່ຟົດຟື້ນ ແລະ ເປັນລະບົບກວ່ານີ້

ໃນໄລຍະກ່ອນ ກະຊວງສຶກສາທິການ ໄດ້ມີຄຳສັ່ງແນະນຳ ແລະ ຊຸກຍູ້ສົ່ງເສີມໃຫ້ແຕ່ລະໂຮງຮຽນສ້າງຫ້ອງເກັ່ງວັນນະຄະດີ ໄປຄຽງຄູ່ກັບການສ້າງ ຫ້ອງເກັ່ງເລກ, ສ້າງໂຮງຮຽນພອນສະຫວັນທາງເລກ ແລະ ວັນນະຄະດີ ແຕ່ເນື່ອງຈາກຂາດບຸກຄະລາກອນ ແລະ ທຶນຮອນ. ໂຮງຮຽນປະເພດນີ້ ກໍຈຳກັດຫລາຍ (ມີແຕ່ຢູ່ວຽງຈັນ ແລະ ຫລວງພະບາງເທົ່ານັ້ນ) ຄວນສືບຕໍ່ສົ່ງເສີມ ແລະ ເພີ່ມຕື່ມ. ຄວນສົ່ງເສີມໃຫ້ອົງການເອກະຊົນ, ຊຸມຊົນ ໄດ້ປະກອບສ່ວນຢ່າງຕັ້ງໜ້າ ທັງທາງດ້ານທຶນຮອນ ແລະ ເນື້ອໃນ

## ການສ້າງຫ້ອງສະໝຸດ/ຫ້ອງອ່ານໃນໂຮງຮຽນ

ການມີ ຫລື ການສົ່ງເສີມການສ້າງຫ້ອງສະໝຸດ ແລະ ຫ້ອງອ່ານໜັງສືຢູ່ໃນໂຮງຮຽນ ມີຄວາມສຳຄັນໃນການເຜີຍແຜ່ວັນນະຄະດີ ໃຫ້ແກ່ຄູ ອາຈານ ແລະ ນັກຮຽນ ເປັນຈຳນວນຫລວງຫລາຍ ໂດຍທາງກົງຈາກນັ້ນ ຫ້ອງສະໝຸດໂຮງຮຽນ ຍັງສາມາດບໍລິການແກ່ຊຸມຊົນທີ່ຕົນອາໄສຢູ່ນຳອີກ ເພາະບົດບາດຂອງໂຮງຮຽນ ໂດຍສະເພາະຢູ່ໃນເຂດຊົນນະບົດ ແມ່ນເປັນສູນກາງທາງດ້ານວັດທະນະທຳຂອງຊຸມຊົນ. ສະນັ້ນບັນຫານີ້ ເປັນບັນຫາທີ່ສຳຄັນຫລາຍ ປັດຈຸບັນນີ້ ຫ້ອງສະໝຸດ ຫລືຫ້ອງອ່ານໃນໂຮງຮຽນ ກະທັ້ງຮອດໂຮງຮຽນມັດທະຍົມຕອນປາຍ ຍັງມີຈຳນວນຈຳກັດຫລາຍ, ທຶນຮອນກໍຂາດເຂີນ ບຸກຄະລາກອນກໍຂາດເຂີນວິທີທີ່ດີທີ່ສຸດແມ່ນຊຸມຊົນ, ພາກເອກະຊົນ ຫລືອົງການຈັດຕັ້ງ ຄວນໃຫ້ການສະໜັບສະໜູນຢ່າງແຂງຂັນ ແຕ່ຈຸດ

ເລີ້ມຕົ້ນ ຄວນແມ່ນລະດັບຜີດຊອບໂຮງຮຽນ ຕ້ອງເຮັດແຕ່ນ້ອຍໄປຫາໃຫຍ່ ເຊັ່ນ: ມີຕູ້ສະໝຸດເຄື່ອນທີ່, ມີມຸມອ່ານຂອງຫ້ອງຮຽນ, ມີການຈັດກິດຈະກຳສົ່ງເສີມການອ່ານປຶ້ມ, ອົບຮົມຄູສອນ ເປັນຜູ້ດຳເນີນການ. ຢູ່ໃນກຸ່ມໂຮງຮຽນ ບ່ອນທີ່ມີສູນຊັບພະຍາກອນຂອງກຸ່ມ ແລະ ມີວິທະຍາກອນປະຈຳກຸ່ມ ກໍມີການດຳເນີນກິດຈະກຳດັ່ງກ່າວແລ້ວ ແຕ່ຄວນຈະປັບປຸງໃຫ້ດີກວ່ານີ້ອີກ ເຊັ່ນ: ສ້າງຫ້ອງສະໝຸດ, ຈັດລະບົບສົ່ງເສີມການອ່ານ, ຮຽນກ່ຽວກັບການນຳໃຊ້ຫ້ອງອ່ານ/ຫ້ອງສະໝຸດ, ອົບຮົມບັນນາລັກ ເປັນຕົ້ນ

ສະຫລຸບໂດຍລວມແລ້ວ ເຫັນວ່າ: ລະບົບການສຶກສາ ແລະ ໂຮງຮຽນ ມີບົດບາດສຳຄັນຫລາຍໃນການປົກປັກຮັກສາເຜີຍແຜ່ ແລະ ພັດທະນາມໍລະດົກດ້ານວັນນະຄະດີຂອງຊາດ ແລະ ສາກົນ.

ຜ່ານມາ ໂຮງຮຽນກໍໄດ້ປະກອບສ່ວນປະຕິບັດຢ່າງຕັ້ງໜ້າ ແລະ ກໍເຮັດໄດ້ດີພໍສົມຄວນ ເຊັ່ນ: ຫລັກສູດ, ກິດຈະກຳການຮຽນ-ການສອນ, ການສອບເສັງແຂ່ງຂັນ, ການຈັດຕັ້ງກິດຈະກຳນອກຫລັກສູດຕ່າງໆ ພ້ອມກັບນັ້ນ ນະໂຍບາຍລະບຽບຫລັກການ, ຫລັກການຄຸ້ມຄອງກໍໄດ້ເຫັນດີໃຫ້ໂຮງຮຽນ ເປັນສູນກາງດັ່ງກ່າວ ແຕ່ຜ່ານມາ ຍັງຈຳກັດຫລາຍ ສາເຫດກໍຄື :

1. ບຸກຄະລາກອນຍັງຈຳກັດ, ຄູຜູ້ດີເດັ່ນທາງດ້ານສິລະປະວັນນະຄະດີ ຍັງຈຳກັດທີ່ສຸດ ທັງທາງດ້ານຈຳນວນ ແລະ ຄຸນນະພາບ
2. ສື່ການຮຽນ-ການສອນ, ສື່ອ່ານເສີມ ສຳລັບຄົ້ນຄວ້າວິໄຈກໍຈຳກັດ, ໜັງສືຜູກໃບລານຍັງຈຳກັດຢູ່ແຕ່ໃນວັດໃນສູນ ຍັງບໍ່ທັນໄດ້ເອົາມາເຜີຍແຜ່ຢ່າງກວ້າງຂວາງ ໂດຍສະເພາະທີ່ເປັນຮູບແບບ ທີ່ຄູ ແລະ ນັກຮຽນສາມາດນຳມາໃຊ້ ໃຫ້ເປັນມູນມໍລະດົກທາງດ້ານວັດທະນະທຳຈິດໃຈຂອງຊາດ, ຂອງທ້ອງຖິ່ນ ເປັນສຸພາສິດ ຄຳສັ່ງສອນໃນການດຳລົງຊີວິດປະຈຳວັນຢູ່ໃນສັງຄົມ
3. ຫລັກສູດຍັງບໍ່ທັນສົມດູນ ແລະ ແທດເໝາະ
4. ພື້ນຖານວັດຖຸຕ່າງໆ : ຫ້ອງສະໝຸດ, ຫ່ອງອ່ານ, ມູມອ່ານ, ຕູ້ສະໝຸດເຄື່ອນທີ່ຂອງຫ້ອງຢູ່ໃນບັນດາໂຮງຮຽນສາມັນ ບໍ່ພຽງພໍ
5. ການລົງທຶນຂອງລັດ ແລະການສະໜັບສະໜູນຂອງຊຸມຊົນ, ສັງຄົມ ແລະອົງການຈັດຕັ້ງຍັງຈຳກັດຫລາຍ
6. ການຈັດຕັ້ງກຸ່ມສະໂມສອນຕາມຈຸດສົນໃຈ ໂດຍສະເພາະກຸ່ມຮັກວັນນະຄະດີບູຮານ/ ທັນສະໄໝຂອງລາວ ຫລືສາກົນ ກໍຈຳກັດ ເພາະຄູວັນນະຄະດີເອງ ກໍບໍ່ໄດ້ຊຸກຍູ້ ຕັ້ງໜ້າແຕ່ສອນ

ບົດບາດຂອງໂຮງຮຽນ/ການສຶກສາ (ສາມັນ) ໃນການປົກປັກຮັກສາ ແລະ

ເຜີຍແຜ່ມໍລະດົກດ້ານວັນນະຄະດີຂອງລາວ

ແນວດຽວ. ນອກນັ້ນ ພາກປະຕິບັດກໍຈຳກັດ ມີແຕ່ທິດສະດີ ແລະ ເລົ່າກັບປາກ ຊຶ່ງເຮັດໃຫ້ນັກຮຽນບໍ່ພຽງແຕ່ບໍ່ມັກວິຊາວັນນະຄະດີເທົ່ານັ້ນ ຍັງເຮັດໃຫ້ວິຊານີ້ ຮູ້ສຶກວ່າໜ້າເບື່ອ ຮຽນເພື່ອເອົາຄະແນນ ບໍ່ຈູບຈ້າວຫ້າວຫັນ, ບໍ່ມີການໂຕ້ວາທີ ໄດ້ແລກປ່ຽນ ຄຳຄິດຄຳເຫັນ

ເພື່ອເຮັດໃຫ້ໂຮງຮຽນ/ການສຶກສາ ເຮັດໜ້າທີ່ໄດ້ດີ ຕ້ອງຮີບຮ້ອນແກ້ໄຂບັນຫາທີ່ເວົ້າມາຂ້າງເທິງ ກະຊວງສຶກສາ ໂດຍສະເພາະໂຮງຮຽນສາມັນ ພ້ອມແລ້ວທີ່ຈະໃຫ້ການຮ່ວມໄມ້ຮ່ວມມືກັບທຸກພາກສ່ວນ.